**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*********

ເລກທີ 01 ສປປ

ລົງວັນທີ 8.5.2007

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ວ່າດ້ວຍ ພາສີທີ່ດິນ.

-----------

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງປີ 2003 ໝວດທີ IV ມາດຕາ 48 ແລະ ໝວດທີ VI ມາດຕາ 67 ຂໍ້ 2.
- ອີງຕາມ ກົດໝາຍ ວ່າດ້ວຍທີ່ດິນ ສະບັບປັບປຸງໃໝ່ ເລກທີ 04/ສພຊ, ລົງວັນທີ 21/10/2003.
- ອີງຕາມ ກົດໝາຍ ວ່າດ້ວຍ ຜັງເມືອງ ສະບັບ ເລກທີ 03/99/ສພຊ, ລົງວັນທີ 03/04/1999.
- ອີງຕາມ ກົດໝາຍ ວ່າດ້ວຍ ງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26/12/2006.
- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21/12/2003.
- ອີງຕາມ ການສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 08/ຄປຈ, ລົງວັນທີ 23 ເມສາ 2007.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ :

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ.**

ລັດຖະບັນຍັດສະບັບນີ້ກຳນົດພາສີທີ່ດິນ ເພື່ອໃຫ້ປະຕິບັດຢ່າງເປັນເອກະພາບກັນໃນຂອບເຂດທົ່ວປະເທດ ຮັບປະກັນໃຫ້ລາຍຮັບປົກກະຕິຈາກພາສີທີ່ດິນ ໄດ້ມອບເຂົ້າຄັງເງິນຢ່າງລວມສູນ, ປະກອບສ່ວນເຮັດໃຫ້ງົບປະມານແຫ່ງລັດ ມີປະສິດທິຜົນ ແລະ ເປັນປົກກະຕິຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

**ມາດຕາ 2. ກຳມະສິດກ່ຽວກັບທີ່ດິນ.**

ທີ່ດິນແຫ່ງ ສປປ ລາວ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງແມ່ນລັດເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ແລະ ມອບໃຫ້ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງເສດຖະກິດນຳໃຊ້, ເຊົ່າ ຫຼື ສຳປະທານ, ມອບໃຫ້ກົມກອງປະກອບອາວຸດ, ອົງການຂອງລັດ, ອົງການຈັດຕັ້ງການເມືອງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນໃຊ້; ສຳລັບຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວນັ້ນ ແມ່ນໃຫ້ເຊົ່າ ຫຼື ສຳປະທານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 03 ຂອງກົດໝາຍວ່າດ້ວຍທີ່ດິນ.

**ມາດຕາ 3. ພັນທະຂອງຜູ້ໃຊ້ ແລະ ຜູ້ນຳໃຊ້ທີ່ດິນ.**

ຜູ້ໃຊ້ ແລະ ຜູ້ນຳໃຊ້ທີ່ດິນທຸກຕອນ ໃນຂອບເຂດທົ່ວປະເທດ ຕ້ອງເສັຍພາສີທີ່ດິນໃຫ້ລັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍວ່າດ້ວຍທີ່ດິນ ເວັ້ນເສັຍແຕ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງລັດຖະບັນຍັດສະບັບນີ້.

# ໝວດທີ II
# ອັດຕາພາສີທີ່ດິນ

**ມາດຕາ 4. ອັດຕາພາສີທີ່ດິນ.**

ອັດຕາພາສີທີ່ດິນ ຊຶ່ງນຳໃຊ້ຢູ່ໃນແຕ່ລະປະເພດກຳນົດໄວ້ດັ່ງນີ້:

1. <u>ທີ່ດິນກະສິກຳ.</u>

| ເຂດເສັຍພາສາທີ່ດິນກະສິກຳ | ອັດຕາພາສີທີ່ດິນຄິດໄລ່ເປັນເງິນ ( ກີບ/ເຮັກຕາ/ປີ ) | | | | | |
|---|---|---|---|---|---|---|
| | ເຂດທົ່ງພຽງ | | ເຂດພູພຽງ | | ເຂດພູດອຍ | |
| | ເຂດຕົວເມືອງ | ເຂດຊົນນະບົດ | ເຂດຕົວເມືອງ | ເຂດຊົນນະບົດ | ເຂດຕົວເມືອງ | ເຂດຊົນນະບົດ |
| I. ທີ່ດິນນາ: | | | | | | |
| 1. ດິນນາຜະລິດເຂົ້າ | 45,000 | 35,000 | 40,000 | 30,000 | 25,000 | 20,000 |
| 2. ດິນນາຖືກໄພທຳມະຊາດທຳລາຍ: | | | | | | |
| 2.1. ເສຍຫາຍສູງກ່ວາ70%ຂຶ້ນໄປ ໃຫ້ຍົກເວັ້ນທັງໝົດຂອງປີນັ້ນ. | ............ | ............ | ............ | ............ | ............ | ............ |
| 2.2. ເສຍຫາຍຕ່ຳກ່ວາ70% - 50% | 10,000 | 5,000 | 9,000 | 5,000 | 5,000 | 5,000 |
| 2.3. ເສຍຫາຍຕ່ຳກ່ວາ 50% ລົງມາ | 20,000 | 10,000 | 10,000 | 10,000 | 8,000 | 8,000 |
| 3. ດິນນາປະເປັນເຮື້ອ | 30,000 | 20,000 | 20,000 | 15,000 | 20,000 | 10,000 |
| II. ທີ່ດິນໄຮ່. | | | | | | |
| 1. ໄຮ່ຄົງທີ່ | 20,000 | 15,000 | 16,000 | 14,000 | 14,000 | 12,000 |
| 2. ໄຮ່ໝູນວຽນ. | 25,000 | 20,000 | 25,000 | 15,000 | 20,000 | 15,000 |
| III. ທີ່ດິນສວນ. | | | | | | |
| 1. ປູກດອກໄມ້ | 12,000 | 9,000 | 11,000 | 10,000 | 10,000 | 10,000 |
| 2. ປູກໄມ້ໃຫ້ໝາກ. | 30,000 | 20,000 | 20,000 | 10,000 | 15,000 | 8,000 |
| 3. ປູກພືດອຸດສາຫະກຳ ແລະ ພືດລົ້ມລຸກ. | 45,000 | 35,000 | 40,000 | 30,000 | 30,000 | 20,000 |
| 4. ປູກພືດເຮັດຢາປົວພະຍາດ. | 20,000 | 10,000 | 15,000 | 8,000 | 10,000 | 6,000 |
| 5. ປູກຜັກທຸກຊະນິດ. | 30,000 | 20,000 | 25,000 | 15,000 | 12,000 | 8,000 |
| 6. ປູກໄມ້ທຸກຊະນິດ. | 25,000 | 15,000 | 20,000 | 10,000 | 12,000 | 8,000 |
| IV. ເນື້ອທີ່ດິນລ້ຽງສັດ. | | | | | | |
| 1. ທົ່ງຫຍ້າທຳມະຊາດລ້ຽງສັດ.. | 35,000 | 20,000 | 30,000 | 15,000 | 20,000 | 12,000 |
| 2. ທົ່ງຫຍ້າທຳມະຊາດໄດ້ບຸກເບີກ | 30,000 | 10,000 | 25,000 | 8,000 | 16,000 | 6,000 |
| 3. ຟາມລ້ຽງສັດ. | 45,000 | 35,000 | 40,000 | 30,000 | 30,000 | 20,000 |
| 4. ໜອງ, ສະລ້ຽງສັດນ້ຳ. | 40,000 | 30,000 | 35,000 | 25,000 | 30,000 | 20,000 |
| V. ທີ່ດິນກະສິກຳອື່ນໆ. | | | | | | |
| 1. ທົ່ງຫຍ້າທີ່ບໍ່ໄດ້ລ້ຽງສັດ. | 40,000 | 30,000 | 35,000 | 25,000 | 30,000 | 20,000 |
| 2. ທີ່ດິນກະສິກຳອື່ນໆບໍ່ໄດ້ນຳໃຊ້. | 40,000 | 30,000 | 35,000 | 25,000 | 30,000 | 20,000 |

## 2. ທີ່ດິນປຸກສ້າງ.

| ເຂດເສັຍພາສີທີ່ດິນປຸກສ້າງ | ອັດຕາພາສີທີ່ດິນ ເປັນ ( ກີບ/ຕາແມັດ/ປີ ) | | | |
|---|---|---|---|---|
| | ທີ່ດິນທີ່ຢູ່ອາໄສ | ທີ່ດິນປຸກສ້າງໂຮງງານ ຫຼື ເຂດອຸດສາຫະກຳ | ທີ່ດິນປຸກສ້າງ ຮ້ານຄ້າ ແລະ ສະຖານທີ່ບໍລິການ | ທີ່ດິນຫວ່າງເປົ່າ ( ທີ່ດິນບໍ່ພັດທະນາ ) |
| **I. ຕົວເມືອງທີ່ຂຶ້ນກັບນະຄອນຫຼວງ** | | | | |
| 1. ເຂດໃຈກາງຕົວເມືອງ. | 80 | 180 | 300 | 300 |
| 2. ເຂດອ້ອມໃຈກາງຕົວເມືອງ. | 60 | 150 | 240 | 240 |
| 3. ເຂດຊານເມືອງ. | 40 | 80 | 180 | 180 |
| 4. ເຂດຂະຫຍາຍຕົວເມືອງ. | 30 | 60 | 100 | 100 |
| **II. ຕົວເມືອງທີ່ຂຶ້ນກັບແຂວງ.** | | | | |
| 1. ເຂດໃຈກາງຕົວເມືອງ. | 60 | 160 | 250 | 250 |
| 2. ເຂດອ້ອມໃຈກາງຕົວເມືອງ. | 50 | 120 | 200 | 200 |
| 3. ເຂດຊານເມືອງ. | 30 | 60 | 180 | 180 |
| 4. ເຂດຂະຫຍາຍຕົວເມືອງ. | 20 | 40 | 80 | 80 |
| **III. ຕົວເມືອງທີ່ຂຶ້ນກັບປົກຄອງ ເມືອງ ຫຼື ເທດສະບານ.** | | | | |
| 1. ເຂດໃຈກາງຕົວເມືອງ. | 25 | 60 | 120 | 120 |
| 2. ເຂດຂະຫຍາຍຕົວເມືອງ. | 20 | 30 | 60 | 60 |
| **IV. ເຂດຊົນນະບົດ.** | | | | |
| 1. ບ້ານຕ່າງໆໃນເຂດທົ່ງພຽງ. | 15 | 20 | 30 | 45 |
| 2. ບ້ານຕ່າງໆໃນເຂດພູພຽງ. | 10 | 15 | 25 | 30 |
| 3. ບ້ານຕ່າງໆໃນເຂດພູດອຍ. | 5 | 8 | 15 | 15 |

## ໝວດທີ III
## ການຍົກເວັ້ນພາສີທີ່ດິນ

ມາດຕາ 5. ພາສີທີ່ດິນ ຈະໄດ້ຮັບການຍົກເວັ້ນໃຫ້ ໃນກໍລະນີດັ່ງນີ້:

ກ. ການຍົກເວັ້ນພາສີທີ່ດິນສໍາລັບທີ່ດິນກະສິກໍາ-ປ່າໄມ້.

1. ເນື້ອທີ່ດິນກະສິກໍາ ທີ່ໄດ້ຮັບການຄົ້ນຄ້ວາທົດລອງ ຫຼື ຜະລິດແນວພັນ.
2. ເນື້ອທີ່ນາຊ່າວໃໝ່ ຍົກເວັ້ນໃຫ້ 3 ປີ ນັບແຕ່ປີເລີ່ມຕົ້ນສັບຊ່າວ.
3. ນາ ຫຼື ໄຮ່ ທີ່ຖືກໄພທໍາມະຊາດທໍາລາຍ ເຮັດໃຫ້ຜົນຜະລິດຖືກເສຍຫາຍແຕ່ 70% ຂຶ້ນໄປ ໃຫ້ຍົກເວັ້ນໝົດໃນປີນັ້ນ.
4. ເນື້ອທີ່ດິນປູກໄມ້ ທີ່ໄດ້ຮັບການຂຶ້ນທະບຽນຢ່າງຖືກຕ້ອງ ຕາມລະບຽບຫຼັກການ ຂອງຂະແໜງກະສິກໍາ ແລະ ປ່າໄມ້ ຊຶ່ງມີໄມ້ແຕ່ 1.100 ຕົ້ນຕໍ່ໜຶ່ງເຮັກຕາຂຶ້ນໄປ ຈະໄດ້ຮັບການຍົກເວັ້ນພາສີທີ່ດິນ.
5. ທີ່ດິນ ທີ່ໄດ້ຮັບການຫັນປ່ຽນເປັນອາຊີບຄົງທີ່ ດ້ວຍການປູກຝັງ ຫຼື ລ້ຽງສັດ ເພື່ອຢຸດຕິການຖາງປ່າເຮັດໄຮ່ ກໍ່ຍົກເວັ້ນພາສີທີ່ດິນ 3 ປີ ນັບແຕ່ປີເລີ່ມຕົ້ນຫັນປ່ຽນອາຊີບ.
6. ຄອບຄົວທີ່ປະສົບກັບອັກຄີໄພທໍາລາຍເຮືອນຊານ ເຮັດໃຫ້ຊັບສິນໃນຄອບຄົວ ຖືກເສຍຫາຍຈະໄດ້ຮັບການພິຈາລະນາ ຍົກເວັ້ນພາສີທີ່ດິນໃນປີນັ້ນ.

**ຂ. ການຍົກເວັ້ນພາສີທີ່ດິນສໍາລັບທີ່ດິນປຸກສ້າງ.**

1. ເນື້ອທີ່ດິນທີ່ຢູ່ອາໄສຂອງວິລະຊົນແຫ່ງຊາດ ແລະ ຜູ້ທີ່ເສຍອົງຄະທີ່ຍັງມີຊີວິດຢູ່ ຍ້ອນໄປປະຕິບັດວຽກງານທາງລັດຖະການ ອອກແຮງງານບໍ່ໄດ້ ຊຶ່ງມີເນື້ອທີ່ດິນບໍ່ເກີນ ແປດຮ້ອຍ ຕາແມັດ ຕໍ່ ຄົນໃນຄອບຄົວ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 42 ຂອງ ກົດໝາຍວ່າດ້ວຍ ທີ່ດິນ ສ່ວນທີ່ເຫຼືອນັ້ນ ໃຫ້ເສັຍເຕັມ.
2. ເນື້ອທີ່ດິນ ທີ່ເປັນສະຖານທີ່ ສໍານັກງານ ອົງການຂອງລັດ ທີ່ໄດ້ຮັບໃຊ້ກິຈຈັກບໍລິຫານ ວິຊາການ, ຮັບໃຊ້ການຄົ້ນຄ້ວາທົດລອງ ທາງດ້ານວິທະຍາສາດ-ເຕັກນິກ, ຮັບໃຊ້ຈຸດປະສົງຂອງວຽກງານ ປ້ອງກັນຊາດປ້ອງກັນຄວາມສະຫງົບສຸກ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ຫ້ອງປິ່ນປົວພະຍາດ, ສະໜາມກິລາ ແລະ ສວນສາທາລະນະອື່ນໆ ຂອງລັດ.
3. ເນື້ອທີ່ວັດ, ໂບດ, ວິຫານ, ປ່າຊ້າ ຂອງທຸກສາດສະໜາ ແລະ ປູສະນີຍະສະຖານອື່ນໆ ທີ່ບໍ່ມີລັກສະນະທຸລະກິດ.

4. ໂຮງຮຽນຂອງເອກະຊົນ ທີ່ມີໃບອະນຸຍາດຢ່າງຖືກຕ້ອງ ຈາກຂະແໜງສຶກສາ.
5. ເນື້ອທີ່ດິນ ຂອງບັນດາສະຖານທູດ ແລະ ອົງການຈັດຕັ້ງສາກົນ ປະຈຳຢູ່ ສ.ປ.ປ ລາວ ທີ່ນຳໃຊ້ໃຫ້ປະຕິບັດຕາມຫຼັກການສາກົນ ແລະ ຕາມການສະເໜີຂອງ ກະຊວງຕ່າງປະເທດ.
6. ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ໄດ້ເຊົ່າດິນນຳລັດແລ້ວຈະບໍ່ເສຍພາສີທີ່ດິນ.

## ໝວດທີ IV
## ການເກັບພາສີທີ່ດິນ

**ມາດຕາ 6. ການເກັບພາສີທີ່ດິນ.**

ຂະແໜງການເງິນເປັນຜູ້ຮັບຜິດຊອບເກັບພາສີທີ່ດິນ ອາກອນທີ່ດິນ, ຄ່າເຊົ່າ, ຄ່າສຳປະທານ, ຄ່າຂາຍສິດນຳໃຊ້ທີ່ດິນ, ຄ່າປັບໃໝ, ຄ່າທົດແທນການທັບປ່ຽນທີ່ດິນ ແລະ ລາຍຮັບອື່ນໆກ່ຽວກັບທີ່ດິນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 11 ວັກ 03 ຂອງດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍທີ່ດິນ.

**ມາດຕາ 7. ກຳນົດເວລາການເສຍພາສີທີ່ດິນ.**

ການເສຍພາສີທີ່ດິນແມ່ນໃຫ້ເລີ່ມ ແຕ່ວັນທີ 01 ຕຸລາ ຫາ ວັນທີ 30 ກັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ ສົກປີງົບປະມານແຫ່ງລັດ ລວມມີ 12 ເດືອນ, ເລີ່ມແຕ່ວັນທີ 1 ຕຸລາ ແລະ ສິ້ນສຸດລົງໃນວັນທີ 30 ກັນຍາ ຂອງປີຖັດໄປ ພາກສ່ວນ ທີ່ຮັບຜິດຊອບການເກັບພາສີທີ່ດິນຕ້ອງສະຫຼຸບ ແລ້ວນຳເງິນດັ່ງ ກ່າວມອບເຂົ້າຄັງເງິນແຫ່ງລັດ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ງົບປະມານແຫ່ງ ລັດ.

**ມາດຕາ 8: ວິທີຄິດໄລ່ພາສີທີ່ດິນສ່ວນເກີນ.**

ມອບໃຫ້ລັດຖະບານເປັນຜູ້ອອກດຳລັດ ແລະ ຂໍ້ກຳນົດລະອຽດ ກ່ຽວກັບວິທີຄິດໄລ່ພາສີທີ່ດິນສ່ວນເກີນໃຫ້ສອດຄ່ອງ ແລະ ເໝາະສົມກັບສະພາບເສດຖະກິດສັງຄົມແຕ່ລະໄລຍະ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 9. ນະໂຍບາຍຕໍ່ຜູ້ມີຜົນງານ.**

ບຸກຄົນໃດທີ່ໄດ້ເສຍພາສີທີ່ດິນ ຖືກຕ້ອງຕາມຈຳນວນ ແລະ ກຳນົດເວລາ, ພະນັກງານລວມທັງຜູ້ປະກອບສ່ວນທີ່ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ເກັບພາສີທີ່ດິນ ຈະໄດ້ຮັບການຍ້ອງຍໍຕາມລະບຽບການ.

**ມາດຕາ 10. ມາດຕະການຕໍ່ຜູ້ລະເມີດ.**

1. ຜູ້ທີ່ມາແຈ້ງ ເສັຍພາສີທີ່ດິນ ຊ້າເກີນກຳນົດເວລາທີ່ກຳນົດໄວ້ ໃນມາດຕາ 07 ຂອງ ລັດຖະບັນຍັດສະບັບນີ້. ນອກຈາກໃຫ້ເສັຍພາສີທີ່ດິນຄົບຖ້ວນຕາມເນື້ອທີ່ດິນນຳໃຊ້ ແລະ ຄຸ້ມຄອງຈະຖືກປັບໃໝ 10% ຂອງຈຳນວນເງິນ ທີ່ຕ້ອງເສັຍພາສີທີ່ດິນໃນປີນັ້ນ.
2. ຜູ້ທີ່ມາແຈ້ງເສັຍພາສີທີ່ດິນບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນຕາມເນື້ອທີ່ດິນທີ່ຕົນໄດ້ຮັບສິດໃຊ້ ແລະ ສິດນຳໃຊ້ແລ້ວ ຈະຖືກປັບໃໝ 30% ຂອງຈຳນວນເງິນທີ່ຕ້ອງເສັຍພາສີທີ່ດິນໃນປີນັ້ນ.
3. ບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ຍອມແຈ້ງເນື້ອທີ່ດິນທີ່ຕົນໄດ້ຮັບສິດໃຊ້ ແລະ ສິດນຳໃຊ້ຈະຖືກປັບໃໝຕາມກໍລະນີ:

- ໃນປີທີໜຶ່ງ ໃຫ້ເສັຍພາສີທີ່ດິນຄືນ ໃຫ້ຄົບຖ້ວນ ພ້ອມທັງເສັຍຄ່າປັບໃໝ 100% ຂອງຈຳນວນ ເງິນທີ່ຕ້ອງເສັຍພາສີທີ່ດິນ.
- ໃນປີທີສອງ ໃຫ້ເສັຍພາສີທີ່ດິນຄືນໃໝ່ ໃຫ້ຄົບຖ້ວນ ພ້ອມທັງເສັຍຄ່າປັບໃໝ 150% ຂອງຈຳນວນເງິນທີ່ຕ້ອງເສັຍພາສີທີ່ດິນ ພ້ອມທັງຖືກກ່າວເຕືອນ ແລະ ຕ້ອງໄດ້ແຈ້ງເປັນລາຍລັກອັກສອນໃຫ້ຜູ້ທີ່ບໍ່ມາເສັຍພາສີທີ່ດິນ.
- ປີທີສາມ ຖ້າຍັງບໍ່ມາແຈ້ງເສັຍພາສີທີ່ດິນ ຈະຖືກປັບໃໝ 200% ຂອງຈຳນວນເງິນທີ່ຕ້ອງເສັຍພາສີທີ່ດິນ.
- ພາຍຫຼັງປີທີສາມຜູ້ໃຊ້ ຫຼື ຜູ້ນຳໃຊ້ທີ່ດິນຕອນນັ້ນຈະເສຍສິດໃຊ້ ຫຼື ສິດນຳໃຊ້ຕາມທີ່ກຳນົດໄວ້ໃນມາດຕາ 62 ( ໃໝ່ ) ຂອງກົດໝາຍ ວ່າດ້ວຍ ທີ່ດິນ.

4. ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບສິດໃຊ້ ຫຼື ສິດນຳໃຊ້ທີ່ດິນຫວ່າງເປົ່າ ຫຼື ທີ່ດິນທີ່ທຳການຜະລິດໃນຕົວເມືອງ ຫຼື ຊານເມືອງໂດຍບໍ່ມີການພັດທະນາ ຫຼື ບໍ່ທຳການຜະລິດ ໃນປີທີໜຶ່ງເປັນຕົ້ນໄປນອກຈາກເສັຍພາສີທີ່ດິນຄົບຖ້ວນແລ້ວ ຍັງຈະຖືກກ່າວເຕືອນ ໂດຍແຈ້ງໃຫ້ຜູ້ກ່ຽວຊາບ ເປັນລາຍລັກອັກສອນ, ໃນປີທີສອງ ຈະຖືກປັບໃໝ 50% ຂອງຈຳນວນເງິນທີ່ຕ້ອງເສັຍພາສີທີ່ດິນ, ໃນປີທີສາມ ຈະຖືກປັບໃໝ 100% ຂອງຈຳນວນ ເງິນທີ່ຕ້ອງເສັຍພາສີທີ່ດິນ ແລະ ໃນປີທີສີ່ ຈະຖືກປັບໃໝ 10% ຂອງມູນຄ່າທີ່ດິນ ຕາມທີ່ໄດ້ປະເມີນໄວ້ແຕ່ລະທ້ອງຖິ່ນນັ້ນ.

ໃນກໍລະນີ ດິນນາ ຊຶ່ງມີຊົນລະປະທານ ແລະ ມີນ້ຳສະດວກ ແຕ່ບໍ່ເຮັດນາແຊງ ຫຼື ບໍ່ປູກພືດອື່ນໆ ນອກຈາກເສັຍພາສີທີ່ດິນແລ້ວ ຍັງຈະຖືກປັບໃໝ 50% ຂອງພາສີທີ່ດິນນາທີ່ຕ້ອງເສັຍ.

5. ບຸກຄົນ ຫຼື ນິຕິບຸກຄົນໃດ ທີ່ມີໜ້າທີ່ເສຍພາສີທີ່ດິນ ຫາກບໍ່ຈິງໃຈ ໃຫ້ຄວາມຮ່ວມມື ກັບພະນັກງານເກັບເກັບພາສີທີ່ດິນ, ບໍ່ຍອມສະໜອງຂໍ້ມູນ ຫຼື ຂໍ້ມູນບໍ່ຊັດເຈນ, ກໍ່ຄວາມຫຍຸ້ງຍາກ, ຂົ່ມຂູ່, ດ່າວ່າຫຼື ໃສ່ຮ້າຍປ້າຍສີ ແລະ ການກະທຳໃດໆທີ່ບໍ່ດີຕໍ່ພະນັກງານເກັບພາສີທີ່ດິນ ນອກຈາກໃຫ້ເສຍພາສີທີ່ດິນຄົບຖ້ວນແລ້ວ ຈະຖືກປັບໃໝ 50% ຂອງຈຳນວນພາສີທີ່ດິນ ທີ່ຖືກເສັຍໃນປີນັ້ນ ພ້ອມທັງປະກອບສຳນວນຄະດີ ເພື່ອດຳເນີນຄະດີ ຕາມລະບຽບກົດໝາຍ.
6. ພະນັກງານ ຫຼື ເຈົ້າໜ້າທີ່ເກັບພາສີທີ່ດິນ ໄດ້ສວຍໃຊ້ໜ້າທີ່ຂອງຕົນ ໃນການເກັບພາສີທີ່ດິນ ບໍ່ຖືກຕ້ອງຕາມອັດຕາພາສີ ທີ່ໄດ້ກຳນົດໄວ້ ໃນລັດຖະບັນຍັດສະບັບນີ້ ກຳນົດໄວ້ເຊັ່ນ: ໄດ້ເພີ່ມ ຫຼື ຫລຸດອັດຕາພາສີທີ່ດິນ ຫຼື ວາງລະບຽບການ ເກັບຕ່າງຫາກ ຫຼື ເກັບພາສີທີ່ດິນໄດ້ແລ້ວ ນຳເງິນໄປໃຊ້ປະໂຫຍດສ່ວນຕົວ ຫຼື ບໍ່ຖອກເຂົ້າຄັງງົບປະມານ ຫຼື ຖອກບໍ່ຄົບຖ້ວນ ແລະ ອື່ນໆ ທີ່ກົດໝາຍ ບໍ່ອະນຸຍາດ ຈະຖືກວິໄນ ພ້ອມທັງສົ່ງເງິນຄືນໃຫ້ຄົບຖ້ວນ ແລະ ດຳເນີນຄະດີຕາມກົດໝາຍທີ່ ກຳນົດໄວ້.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 11. ການຈັດຕັ້ງປະຕິບັດ.**

ລັດຖະບານແຫ່ງ ສປປ ລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 12. ຜົນສັກສິດ.**

ລັດຖະບັນຍັດສະບັບນີ້ປ່ຽນແທນລັດຖະບັນຍັດສະບັບເລກທີ03/ສປປ, ລົງວັນທີ 12/08/2000.

ບັນດາດຳລັດຂໍ້ກຳນົດ ແລະ ກົດລະບຽບ ໃດທີ່ຂັດກັບລັດຖະບັນຍັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບັນຍັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດແຫ່ງ ສປປ ລາວ**

ຈູມມາລີ ໄຊຍະສອນ